**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມຂົນສົ່ງ

ເລກທີ 11894/ກຂສ

ນະຄອນຫຼວງວຽງຈັນ, ວັນທີ 27 ພຶດສະພາ 2025

## ໜັງສືແຈ້ງເຊີນປະມູນ

1. ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍເຊີນບັນດາບໍລິສັດສະໜອງ ເຄື່ອງເອເລັກໂທນິກ ແລະ ເຄື່ອງໃຊ້ຫ້ອງການ ທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນເພື່ອສະໜອງ ຄອມພິວເຕີໂນັດບຸກ ຈຳນວນ 9 ໜ່ວຍ, ເຄື່ອງພິມເອກະສານ (ສີ) ຈຳນວນ 3 ໜ່ວຍ,ເຄື່ອງພິມເອກະສານ (ຂາວດຳ) ຈຳນວນ 3 ໜ່ວຍ ເຄື່ອງສະແກນເອກະສານ ຈຳນວນ 2 ເຄື່ອງ ໃຫ້ແກ່ແຕ່ລະພະແນກໃນກົມຂົນສົ່ງ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມ.
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ພະແນກຈັດຕັ້ງ-ບໍລິຫານ ແລະ ແຜນການ, ກົມຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ ໂທ 020 52703234, 021 412269 ແລະ ການຂາຍຊອງປະມູນເລີ່ມແຕ່ວັນທີ 27 ພຶດສະພາ - 02 ກໍລະກົດ 2025 (ຕາມໂມງລັດຖະການ) ໃນລາຄາ 500,000 ກີບ (ຫ້າແສນກີບ) ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ.
5. ການຍື່ນຊອງປະມູນ ແມ່ນສົ່ງເຖິງ ກົມຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ
   - ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 03 ກໍລະກົດ 2025;
   - ການເປີດຊອງປະມູນຈະຈັດຂຶ້ນໃນວັນທີ 03 ກໍລະກົດ 2025 ເວລາ 14:00 ໂມງ, ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ;
   - ສະຖານທີ່ຫ້ອງປະຊຸມເບີ A ກົມຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ.
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນດ້ວຍການວາງເງິນສົດ ຫຼື ໜັງສືຄ້ຳປະກັນໂດຍທະນາຄານ (Bank Garantee)./.

**ຫົວໜ້າກົມ**

**ດຣ. ບຸນຕາ ອ່ອນນາວົງ**